ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ເມືອງສາລະວັນ

ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງ. ເລກທີ 011 /ພບຕ.

ສາລະວັນ, ວັນທີ 04.03.2026

## ໜັງສືແຈ້ງການເຊີນ
## ເຂົ້າຮ່ວມປະມູນ(ຈັດຊື້-ຈັດຈ້າງ).

**ເຖິງ:** ບໍລິສັດ ຮັບເໝົາກໍ່ສ້າງ ແລະ ສ້ອມແປງຂົວທາງ ແລະ ເຄຫາສະຖານ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ທີ່ນັບຖື.

**ເລື່ອງ:** ປະກາດແຈ້ງການເຊີນເຂົ້າຮ່ວມການປະມູນ (ຈັດຊື້-ຈັດຈ້າງ) ໂຄງການ ຟື້ນຟູ ຟູດບາດລຽບຕາມທາງຢາງ ແຕ່ວັດກາງ ຫາ ໂຄ້ງເຮືອນຮັບແຂກຂອງແຂວງ ລວງຍາວສອງຂ້າງ 1.38 km ເມືອງສາລະວັນ.

- ອີງຕາມ ກົດໝາຍ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ວ່າດ້ວຍ ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.
- ອີງຕາມ ສະບັບເລກທີ 72 /ສພຊ, ນະຄອນຫຼວງວຽງຈັນ ລົງວັນທີ 15 ທັນວາ 2015 ກົດໝາຍວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ).
- ອີງຕາມ ຂໍ້ຕົກລົງ ຂອງເຈົ້າເມືອງ ສະບັບເລກທີ 634/ຈມ, ລົງວັນທີ 30 ກັນຍາ 2024.ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນ ໄຫວ ຂອງ ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ.
- ອີງຕາມ ແຈ້ງການຂອງຫ້ອງການການເງິນເມືອງສາລະວັນ, ເລກທີ 63/ກງມ.ສວ, ລົງວັນທີ 03/03/ 2026 ກ່ຽວກັບ ແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026.

**ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ** ຂໍຖືເປັນກຽດແຈ້ງການມາຍັງທ່ານຊາບວ່າ: ຫາກບໍລິສັດໃດມີຄວາມສົນໃຈ ຕ້ອງການເຂົ້າຮ່ວມການປະມູນ ໂຄງການ ຟື້ນຟູ ຟູດບາດລຽບຕາມທາງຢາງ ແຕ່ວັດກາງ ຫາ ໂຄ້ງເຮືອນຮັບແຂກຂອງແຂວງ ລວງຍາວສອງຂ້າງ 1.38 km ເມືອງສາລະວັນ ເພື່ອຮັບເໝົາກໍ່ສ້າງ ເຊິ່ງຜູ້ສົນໃຈຕ້ອງມີໃບດໍາເນີນທຸລະກິດ ດ້ານການກໍ່ສ້າງ ຂົວທາງ ແລະ ເຄຫາສະຖານ ຄົບຖ້ວນ ຕາມລະບຽບກົດໝາຍ ສ່ວນການສໍາລະສະສາງ ແມ່ນຕາມສົກງົບປະມານທີ່ມີໃນແຕ່ລະປີ, ການເຂົ້າຮ່ວມການປະມູນມີລາຍລະອຽດດັ່ງລຸ່ມນີ້:

1. ໂຄງການ ຟື້ນຟູ ຟູດບາດລຽບຕາມທາງຢາງ ແຕ່ວັດກາງ ຫາ ໂຄ້ງເຮືອນຮັບແຂກຂອງແຂວງ ລວງຍາວສອງຂ້າງ 1.38 km ເມືອງສາລະວັນ ຢູ່ເຫດສະບານ ເມືອງສາລະວັນ ເວລາການກໍ່ສ້າງ ແມ່ນ 24 ເດືອນ, ເລີ່ມລົງມືກໍ່ສ້າງນັບແຕ່ມື້ເຊັນສັນຍາ ເປັນຕົ້ນໄປ.
2. ເອກະສານປະມູນສາມາດສະເໜີຊື້ ທີ່ ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ ໃນເວລາທາງລັດຖະການ ມີລາຄາ ຊຸດລະ 1,000,000 ກີບ( ໜຶ່ງລ້ານກີບ)ການປະມູນ ມີໄລຍະເວລາ ພຽງ 1 ວັນ.

ສແກນດ້ວຍ CamScanner

3. ກອງປະຊຸມການປະມູນຈະໄດ້ຈັດຂຶ້ນ ເວລາ 08:30 ໃນວັນທີ 10/04/2026 ທີ່ຫ້ອງປະຊຸມ ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ.

ໝາຍເຫດ; ເອກະສານປະກອບໃນການປະມູນມີດັ່ງນີ້:

| | |
|---|---|
| 1. ໃບສະເໜີຂໍອະນຸຍາດຈັດຕັ້ງປະຕິບັດໂຄງການ(ໃບເຈດຈຳນົງ)ແບບຟອມຍື່ນປະມູນ | ຈຳນວນ 01 ໃບ. |
| 2. ໃບຄິດໄລ່ລາຄາແຜ່ນຜັງການກໍ່ສ້າງຄົບຊຸດ | ຈຳນວນ 01 ຊຸດ. |
| 3. ໃບທະບຽນວິສາຫະກິດ (ຈາກ ພະແນກ ການຄ້າແຂວງ) | ຈຳນວນ 01 ໃບ. |
| 4. ໃບໄລ່ລຽງອາກອນປີ2024ໃຫ້ຖືກຕ້ອງຕາມລະບຽບກົດໝາຍ | ຈຳນວນ 01 ໃບ. |
| 5. ໃບຢັ້ງຢືນ ຜົນງານຜ່ານມາ | ຈຳນວນ 01 ໃບ. |
| 6. ໜັງສືຄ້ຳປະກັນການປະມູນ 2% ຂອງມູນຄ່າເຊັນຢັ້ງຢືນຈາກສະຖາບັນການເງິນ | ຈຳນວນ 01 ໃບ. |
| 7. ໃບປະກາດສະນີຍະບັດຂອງພະນັກງານວິຊາການ ຂົວທາງ ຂອງບໍລິສັດ | ຈຳນວນ 03 ສຫ. |
| 8. ຕາຕະລາງແຜນປະຕິບັດວຽກ ແລະ ກຳນົດເວລາການກໍ່ສ້າງ | ຈຳນວນ 01 ຊຸດ. |
| 9. ໃບຢັ້ງຢືນ ຖານະການເງິນຈາກທະນະຄານ ອາຍຸບໍ່ເກີນ 3 ເດືອນ | ຈຳນວນ 01 ໃບ. |
| 10. ໃບອະນຸຍາດ ຂໍສືບຕໍ່ ດຳເນີນທຸລະກິດຈາກຂະແໜງ ຍທຂ | ຈຳນວນ 01 ໃບ. |
| 11. ຕ້ອງມີໃບມອບສິດດຳເນີນທຸລະກິດຈາກບໍລິສັດແມ່(ຖ້າໄດ້ຮັບຈາກຜູ້ອື່ນ) | ຈຳນວນ 01 ໃບ. |
| 12. ໃບຊີວະປະຫວັດຫຍໍ້ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ | ຈຳນວນ 01 ຊຸດ. |
| 13. ໃບຢັ້ງຢືນທີ່ຢູ່ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ | ຈານວນ 01 ຊຸດ. |

14. ເອກະສານອື່ນໆທີ່ກ່ຽວຂ້ອງການເປີດບໍລິສັດ.

ດັ່ງນັ້ນ, ຈຶ່ງແຈ້ງການ ມາເຖິງບັນດາບໍລິສັດ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໂຄງການດັ່ງກ່າວ ໃນຄັ້ງນີ້ ຕາມເນື້ອໃນ ແລະ ເງື່ອນໄຂຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ແຂວງສາລະວັນ
ຫ້ອງການ
ພັດທະນາ ແລະ ບໍລິຫານ
ຕົວເມືອງສາລະວັນ
ເມືອງສາລະວັນ

ບົວພັນ ພົມຈະເລີນ

สแกนด้วย CamScanner